## II. <u>ລາຍງານການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u> (ປະຈຳໄຕມາດ I ປີ 2016)

### 1. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບໃນຕ່າງປະເທດ</u>

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດໃນໄຕມາດທີ່ຜ່ານມາທຽບກັບໄຕມາດນີ້ ມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ**: ດັດຊະນີ Dow Jones ປັບຕົວເພີ່ມຂຶ້ນ 1.45% ແລະ S&P500 0,77% ຍົກເວັ້ນ ດັດຊະນີ NASDAQ ປັບຕົວຫຼຸດລົງ -4,03%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນເນື່ອງຈາກລາຍງານຜູ່ຂໍສະຫວັດດີການວ່າງງານ ຕໍ່າກວ່າທີ່ນັກວິເຄາະຄາດການໄວ້ ແລະ ຕໍ່າກວ່າລະດັບ 300.000 ຄົນ ເປັນອາທິດທີ 51 ເຊິ່ງຖືວ່າຍາວນານທີ່ສຸດນັບຕັ້ງແຕ່ປີ 1970 ແລະ ຄະນະກຳມະການນະໂຍບາຍການເງິນ (FOMC) ຂອງທະນາຄານກາງ ສ.ອາເມລິກາ ປະກາດປັບຂຶ້ນອັດຕາດອກເບ້ຍໄລຍະສັ້ນ 0,25-0,5% ໂດຍຈະມີການປັບຂຶ້ນອັດຕາດອກເບ້ຍ 0,25% ພຽງ 2 ຄັ້ງຈາກກ່ອນໜ້ານີ້ຈະປັບຂຶ້ນ 4 ຄັ້ງໃນ 1 ປີ ພາຍຫຼັງຈາກທີ່ທະນາຄານກາງ ສ.ອາເມລິກາ ປະເມີນວ່າເສດຖະກິດໂລກຍັງບໍ່ມີສະຖຽນລະພາບ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ**: ດັດຊະນີ ເອີຣົບ (Eurofirst 300) ປັບຕົວຫຼຸດລົງ -4,65%, ຝຣັ່ງ (CAC40) -3,09% ແລະ ເຢຍລະມັນ (DAX) -4,52% ສ່ວນ ດັດຊະນີ ຕະຫຼາດຫຼັກຊັບ ລຸກຊໍາບວກ (LUXXX) ປັບຕົວເພີ່ມຂຶ້ນ 2,41% ແລະ ອັງກິດ (FTSE100) 2,72%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ປັບຕົວຫຼຸດລົງເນື່ອງຈາກ ບັນຫາຂອງລາຄານໍ້າມັນໂລກທີ່ປັບຕົວຫຼຸດລົງຢ່າງຕໍ່ເນື່ອງ ເຊິ່ງສົ່ງຜົນໃຫ້ບັນດາຮຸ້ນຂອງບໍລິສັດໃນກຸ່ມພະລັງງານໃນເອີຣົບປັບຕົວຫຼຸດລົງ. ນອກນີ້, ຍັງມີການລາຍງານ ການຜະລິດໃນພາກອຸດສາຫະກຳໃນຂົງເຂດເອີຣົບຈະປັບຕົວ ຫຼຸດລົງ 0,7% ທຽບໃສ່ທ້າຍປີທີ່ຜ່ານມາ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ອາຊຽນ (ASEAN 40) ປັບຕົວເພີ່ມຂຶ້ນ 10,71%, ໄຕ້ຫວັນ (TWSE) 5,84%, ສິງກະໂປ (STRAIT TIMES) 1,28%, ສ.ເກົາຫຼີ (KOSPI) 0,7%, ມາເລເຊຍ (FBMLCI) 5,86%, ຟີລິບປິນ (PCOMP) 6,51%, ຕະຫຼາດຫຼັກຊັບ ໄທ (SET) 11,68%, ສສ. ຫວຽດນາມ (HOCHIMIN) 1,38%, ອົດສະຕາລີ (S&P/ASX200) 0,65%, ອິນໂດເນເຊຍ (JCI) 8,09% ແລະ ສສ. ຫວຽດນາມ (HANOI) 2,35%, ສ່ວນ ຕະຫຼາດຫຼັກຊັບ ກຳປູເຈຍ (CSX) ປັບຕົວຫຼຸດລົງ -2,54%, ຍີ່ປຸ່ນ (NIKKEI225) -10,12%, ຮ່ອງກົງ (HANG SENG) -5,40%, ສປ.ຈີນ (SHANGHAI) -17,36% ແລະ ສປ.ຈີນ (SHENZHEN) -19,32%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ອາຊີ ສ່ວນໃຫຍ່ປັບຕົວເພີ່ມຂຶ້ນເນື່ອງຈາກ ທະນາຄານກາງ ຍີ່ປຸ່ນ (BOJ) ໄດ້ປະກາດດຳເນີນມາດຕະການກະຕຸ້ນເສດຖະກິດ ໂດຍການປະກາດຫຼຸດອັດຕາດອກເບ້ຍລົງເຫຼືອ -0,1% ເພື່ອກະຕຸ້ນໃຫ້ທະນາຄານທຸລະກິດນຳເງິນສຳຮອງໄປປ່ອຍກູ້ ແລະ ການທີ່ທະນາຄານ ສປ. ຈີນ ປະກາດອັດສີດເມັດເງິນເພີ່ມຢ່າງຕໍ່ເນື່ອງເຂົ້າສູ່ຕະຫຼາດນອກຈາກທີ່ໄດ້ປະກາດປັບຫຼຸດອັດຕາຄັງສຳຮອງຂອງທະນາຄານທຸລະກິດ (RRR) ລົງເຫຼືອພຽງ 17%.

## II. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນໄຕມາດນີ້ປິດຢູ່ທີ່ 1.163,18 ຈຸດ ຫຼຸດລົງ 1,54% ເມື່ອທຽບໃສ່ໄຕມາດຜ່ານມາ, ຕະຫຼອດໄຕມາດມີປະລິມານຊື້-ຂາຍຮຸ້ນທັງໝົດ 7,33 ລ້ານຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 39,07 ຕື້ກີບ ເພີ່ມຂຶ້ນ 70,20% ທຽບໃສ່ໄຕມາດຜ່ານມາ. ໂດຍໄຕມາດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 53,79% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.407 ກີບ ຫຼຸດລົງ 1.093 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1,65 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 7,31 ຕື້ກີບ ເພີ່ມຂຶ້ນ 66,79% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍໄຕມາດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 42,50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,48%[1].

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.892 ກີບ ຫຼຸດລົງ 320 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5,08 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 29,93 ຕື້ກີບ ເພີ່ມຂຶ້ນ 87,14% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 48,06% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[2].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 6.976 ກີບ ຫຼຸດລົງ 772 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 556 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,87 ລ້ານກີບ ຫຼຸດລົງ 98,22% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 21,43% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.873 ກີບ ເພີ່ມຂຶ້ນ 10 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 331.349 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 951,89 ລ້ານກີບ ຫຼຸດລົງ 29,64% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 29,91% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[4].

ຮຸ້ນຂອງບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.356 ກີບ ເພີ່ມຂຶ້ນ 96 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 260.356 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 873,86 ລ້ານກີບ ຫຼຸດລົງ 13,40% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 42,75% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,22%[5].

**(ຮອງ) ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**



ທ. ບຸນຈິງ ກອງຄຳ

**ຕາຕະລາງ1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

---

[1] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[3] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[5] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

| | ໄຕມາດ 4 | | ໄຕມາດ 1 | | % ການປ່ຽນແປງ | |
|---|---|---|---|---|---|---|
| | ຈຳນວນ(ລ້ານຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ກີບ) | ຈຳນວນ(ລ້ານຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ກີບ) | ຈຳນວນ | ມູນຄ່າການຊື້ຂາຍ |
| BCEL | 796.926 | 4.383.598.700 | 1.658.830 | 7.311.267.300 | 108,15 | 66,79 |
| EDL-GEN | 2.575.004 | 15.996.174.600 | 5.080.206 | 29.934.616.950 | 97,29 | 87,14 |
| LWPC | 28.055 | 217.373.800 | 556 | 3.878.800 | -98,02 | -98,22 |
| PTL | 472.640 | 1.352.852.400 | 331.349 | 951.899.200 | -29,89 | -29,64 |
| SVN | 309.500 | 1.009.050.000 | 260.356 | 873.860.400 | -15,88 | -13,40 |
| ທັງໝົດ | 4.182.125 | 22.959.049.500 | 7.331.297 | 39.075.522.650 | 75,30 | 70,20 |

**ແຜນວາດ1: ດັດຊະນີຕະຫຼາດຫຼັກຊັບລາວ**

(ວັນທີ 11 ມັງກອນ - 22 ມີນາ 2016)




**ແຜນວາດ2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ**

(ເດືອນ ມັງກອນ - ມີນາ 2016)

ຫົວໜ່ວຍ: ລ້ານກີບ




**ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ**

| ຊື່ດັດສະນີ | ປະເທດ | ດັດຊະນີໃນໄຕມາດນີ້ | ດັດຊະນີໃນໄຕມາດກ່ອນ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 17.502,59 | 17.251,62 | 250,97 | 1,45 |
| NASDAQ | ສ.ອາເມລິກາ | 4.768,86 | 4.968,92 | -200,06 | -4,03 |
| S&P500 | ສ.ອາເມລິກາ | 2.036,71 | 2.021,15 | 15,56 | 0,77 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.336,7 | 1.401,94 | -65,24 | -4,65 |
| DAX | ເຢຍລະມັນ | 10.022,93 | 10.497,77 | -474,84 | -4,52 |
| FTSE100 | ອັງກິດ | 6.199,11 | 6.034,84 | 164,27 | 2,72 |
| CAC40 | ຝຣັ່ງ | 4.423,98 | 4.565,17 | -141,19 | -3,09 |
| LUXXX | ລຸກຊຳບວກ | 1.379,533 | 1.347,066 | 32,467 | 2,41 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 17.000,98 | 18.916,02 | -1.915 | -10,12 |
| KOSPI | ສ.ເກົາຫຼີ | 1.995,12 | 1.981,19 | 13,93 | 0,70 |
| HANGSHENG | ຮ່ອງກົງ | 20.615,23 | 21.791,68 | -1.176,5 | -5,40 |
| TWSE | ໄຕ້ຫວັນ | 8.766,09 | 8.282,17 | 483,92 | 5,84 |
| SHANGHAI | ສປ. ຈີນ | 3.009,96 | 3.642,47 | -632,51 | -17,36 |
| SHENZHEN | ສປ. ຈີນ | 1.902,533 | 2.357,99 | -455,46 | -19,32 |
| S&P/ASX200 | ອົດສະຕາລີ | 5.142,30 | 5.109 | 33,3 | 0,65 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 9.169 | 8.281,76 | 887,24 | 10,71 |
| STRAIT TIME | ສິງກະໂປ | 2.881,98 | 2.845,55 | 36,43 | 1,28 |
| SET | ໄທ | 1.412,16 | 1.264,44 | 147,72 | 11,68 |
| FBMLCI | ມາເລເຊຍ | 1.724,55 | 1.629,09 | 95,46 | 5,86 |
| JCI | ອິນໂດເນເຊຍ | 4.854,18 | 4.490,68 | 363,5 | 8,09 |
| PCOMP | ຟີລິບປິນ | 7.360,05 | 6.910,34 | 449,71 | 6,51 |
| HOCHIMIN | ສສ. ຫວຽດນາມ | 574,71 | 566,9 | 7,81 | 1,38 |
| HANOI | ສສ. ຫວຽດນາມ | 80,57 | 78,72 | 1,85 | 2,35 |
| CSX | ກຳປູເຈຍ | 385,96 | 396,01 | -10,05 | -2,54 |
| LSX | ສປປ. ລາວ | 1.163,18 | 1.181,3 | -18,12 | -1,53 |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 2.659,89 | 2.837,52 | -177,63 | -6,3 |
| SET BANK | ໄທ | 496,78 | 424,6 | 72,18 | 17 |